# ບົດອອກຂ່າວ

## ກອງປະຊຸມນໍາສະເໜີໂຄງການ ກ່ຽວກັບ ການປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ

ໃນຕອນເຊົ້າຂອງ ວັນທີ 10 ທັນວາ 2020, ນະຄອນຫຼວງວຽງຈັນ ໄດ້ຈັດກອງປະຊຸມເປີດໂຄງການ ແລະ ກອງປະຊຸມ ເພື່ອແກ້ໄຂການປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ ເພື່ອເຊື່ອມສານບົດບາດຍິງ-ຊາຍ ເຂົ້າໃນ ວາລະການພັດທະນາແຫ່ງຊາດ ຂອງ ສປປ ລາວ ກອງປະຊຸມຈັດຂຶ້ນທີ່ ອົງການສະຫະປະຊາຊາດ ເຊິ່ງກົງກັບ ວັນສິດທິ ມະນຸດສາກົນ 10 ທັນວາ ແລະ ເປັນມື້ສຸດທ້າຍຂອງ 16 ວັນ ຂອງການເຄື່ອນໄຫວ ເພື່ອການລົບລ້າງຄວາມຮຸນແຮງຕໍ່ ແມ່ຍິງ.

ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ຄວາມສາມາດແຫ່ງຊາດ ສໍາລັບການປ້ອງກັນທີ່ມີປະສິດຕິຜົນ, ເປັນລະບົບ ແລະ ມີຄວາມຮັບຜິດຊອບຕໍ່ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ໃນ ສປປ ລາວ, ສະຫະພັນແມ່ຍິງລາວ ຈະເຮັດວຽກຮ່ວມ ກັນກັບອົງການສະຫະປະຊາຊາດ ເພື່ອການພັດທະນາ ແລະ ອົງການສະຫະປະຊາຊາດ ກອງທຶນເພື່ອປະຊາກອນ ຢູ່ ສປປ ລາວ ມີງົບປະມານທຶນສະໜັບສະໜູນ ທັງໝົດ 2,7 ລ້ານໂດລາສະຫະລັດ ຈາກອົງການຮ່ວມມືສາກົນ ສ. ເກົາຫຼີ, ໄລຍະເວລາໃນການຈັດຕັ້ງປະຕິບັດ 4 ປີ ເຊິ່ງເລີ່ມແຕ່ເດືອນ ທັນວາ 2020 ເຖິງເດືອນ ພະຈິກ 2024.

ພິທີເປີດໂຄງການ ແລະ ກອງປະຊຸມຄະນະຮັບຜິດຊອບໂຄງການ ໂດຍການເປັນປະທານຂອງ ທ່ານ ນາງ ບົວຈັນ ສີຫານາດ, ຮອງປະທານຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ ແລະ ເປັນປະທານຮ່ວມ ໂດຍ ທ່ານ ນາງ Catherine Phoung, ຮອງຜູ້ຕາງໜ້າ ອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈໍາ ສປປ ລາວ, ພ້ອມດ້ວຍ ທ່ານ Victor Valdivieso, ຮອງຜູ້ຕາງໜ້າ ອົງການສະຫະປະຊາຊາດ ກອງທຶນເພື່ອປະຊາກອນ ປະຈໍາ ສປປ ລາວ. ເຂົ້າຮ່ວມກອງປະຊຸມດັ່ງກ່າວ ມີອົງການຮ່ວມມືສາກົນ ສ. ເກົາຫຼີ, ທ່ານ ນາງ Jeonghee Im, ຜູ້ຕາງໜ້າ ອົງການຮ່ວມມືສາກົນ ສ. ເກົາຫຼີ, ມີຕາງໜ້າມາຈາກ ກະຊວງແຜນການ ແລະ ການລົງທຶນ, ກະຊວງການຕ່າງປະເທດ, ແລະ ບັນດາຄູ່ຮ່ວມງານຈາກອົງການຈັດຕັ້ງທາງສັງຄົມ ເປັນຕົ້ນ ອົງການແຄບາງຊາດ, ສະມາຄົມ ເພື່ອການພັດທະນາແມ່ຍິງ ແລະ ການສຶກສາກົດໝາຍ, ສະມາຄົມອົງການຈັດຕັ້ງ NGO ສ. ເກົາຫຼີ ປະຈໍາ ສປປ ລາວ ແລະ ສະມາຄົມພັດທະນາ ບົດບາດຍິງ - ຊາຍ.

ດ້ວຍຄວາມເຫັນດີເຫັນພ້ອມໃນທົ່ວໂລກທີ່ນັບມື້ນັບຮັບຮູ້ຄວາມຮຸນແຮງຕໍ່ບົດບາດຍິງ-ຊາຍ ເຊັ່ນດຽວກັບຕໍ່ ແມ່ຍິງ ຖືວ່າເປັນການລະເມີດສິດທິມະນຸດຂັ້ນພື້ນຖານທີ່ຮ້າຍແຮງ. ໃນເວລານີ້, ບັນຫາດັ່ງກ່າວແມ່ນໄດ້ເພີ່ມຫຼາຍຂຶ້ນ ໃນທຸກພາກສ່ວນຂອງສັງຄົມ, ເຊິ່ງ ສປປ ລາວ ກໍ່ບໍ່ມີຂໍ້ຍົກເວັ້ນ. ໃນປີ 2020, ການລະບາດຂອງພະຍາດ COVID-19 ໄດ້ເຮັດໃຫ້ຄວາມບໍ່ສະເໝີພາບ ລະຫວ່າງ ຍິງ-ຊາຍ ແລະ ຄວາມບໍ່ເທົ່າທຽມ

ໃນສັງຄົມຫຼາຍຂຶ້ນ. ການລົບລ້າງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແມ່ນພາກສ່ວນໜຶ່ງທີ່ສຳຄັນຂອງຂະບວນການພັດທະນາ.

ທ່ານ ນາງ ບົວຈັນ ສີຫາບາດ, ຮອງປະທານຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ ກ່າວເນັ້ນວ່າ, ໃນລະດັບຊາດ, ໂຄງການປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ ສຳລັບການເຊື່ອມສານບົດບາດຍິງ-ຊາຍ ເຂົ້າໃນວາລະການພັດທະນາແຫ່ງຊາດ ໃນ ສປປ ລາວ ຈະປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດ ແຜນພັດທະນາແມ່ ຍິງແຫ່ງຊາດຄັ້ງທີ VIII, ແຜນປະຕິບັດງານເພື່ອການປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ (2021-2025) ເຊິ່ງໄດ້ຖືກເຊື່ອມເຂົ້າໃນແຜນ ພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ຄັ້ງທີ IX. ໃນລະດັບພາກພື້ນ, ໂຄງການນີ້ຈະປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນປະຕິບັດງານພາກພື້ນອາຊຽນ ວ່າດ້ວຍ ການລົບລ້າງຄວາມ ຮຸນແຮງຕໍ່ແມ່ຍິງ ແລະ ໃນລະດັບສາກົນ, ມັນຍັງຈະປະກອບສ່ວນໂດຍກົງໃຫ້ແກ່ການບັນລຸເປົ້າໝາຍການພັດທະນາແບບຍືນຍົງ SDG 5 ແລະ SDG 16 ພ້ອມທັງສົນທິສັນຍາ ວ່າດ້ວຍ ການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ (CEDAW) ແລະ ICPD 25.

ທ່ານ ນາງ Catherine Phoung ໄດ້ກ່າວວ່າ "ໂຄງການແມ່ນມີຄວາມທ່ວງທັນເວລາຫຼາຍໃນການແກ້ໄຂ ບັນຫາ GBV ເນື່ອງຈາກວ່າ ລັດຖະບານແຫ່ງ ສປປ ລາວ ໄດ້ເລີ່ມຕົ້ນຂະບວນການ ເພື່ອພັດທະນາແຜນພັດທະນາເສດ ຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX ແລະ ແຜນຂອງບັນດາຂະແໜງການທີ່ກ່ຽວຂ້ອງ, ແຜນຍຸດທະສາດ ຕ້ານການໃຊ້ຄວາມຮຸນແຮງທີ່ອີງໃສ່ບົດບາດຍິງ-ຊາຍ ຄັ້ງຕໍ່ໄປ ແລະ ແຜນແມ່ບົດຂອງຂະແໜງການກົດໝາຍ."

ໂຄງການດັ່ງກ່າວນີ້ມີຈຸດປະສົງ ເພື່ອເອົາໃຈໃສ່ການເຊື່ອມໂຍງທີ່ສຳຄັນ ລະຫວ່າງ ຄວາມຮຸນແຮງຕໍ່ບົດບາດ ຍິງ-ຊາຍ ແລະ ຜົນສຳເລັດຂອງວາລະການພັດທະນາແຫ່ງຊາດ ແລະ ເປົ້າໝາຍການພັດທະນາແບບຍືນຍົງ (SDGs) ແລະ ຈະສະໜັບສະໜູນໃຫ້ແກ່ອຳນາດການປົກຄອງແຫ່ງຊາດ ໃນ ການວາງແຜນການລິເລີ່ມຂອງຂະແໜງການ ເພື່ອແກ້ ໄຂ ແລະ ຫຼຸດຜ່ອນຄວາມຮຸນແຮງດັ່ງກ່າວ.

ທ່ານ ນາງ Im ໄດ້ກ່າວເນັ້ນວ່າ "ອົງການຮ່ວມມືສາກົນ ສ. ເກົາຫຼີ ໄດ້ພະຍາຍາມສ້າງແບບຢ່າງໃນການໃຫ້ການຊ່ວຍເຫຼືອຜູ້ລອດຊີວິດຈາກຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ." ພ້ອມທັງ " ຄວາມພະຍາຍາມຂອງ ອົງການສະຫະປະຊາຊາດ ເພື່ອການພັດທະນາ, ອົງການສະຫະພປະຊາຊາດ ກອງທຶນເພື່ອປະຊາກອນ, ສູນກາງສະຫະພັນແມ່ຍິງລາວ ແລະ ອົງການຮ່ວມມືສາກົນ ສ. ເກົາຫຼີ ຈະຖືເອົາບັນຫາການຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງເປັນວາລະສຳຄັນ ຂອງການພັດທະນາປະເທດຊາດ ໃນ ສປປ ລາວ ເຊິ່ງຈະເປັນການສິ້ນສຸດລົງ ແລະ ເຮັດໃຫ້ແມ່ຍິງທຸກຄົນໃນ ສປປ ລາວ ສາມາດໄດ້ຮັບການປົກປ້ອງຈາກຄວາມຮຸນແຮງ."

ລັດຖະບານ ຍັງມີພັນທະໃນການຈັດຕັ້ງປະຕິບັດ ແລະ ປະສານງານກິດຈະກຳຕ່າງໆ ເພື່ອຕອບສະໜອງກັບທຸກ ຮູບແບບຂອງວຽກງານຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງຢ່າງເປັນລະບົບ.

ພິຈາລະນາບັນຫາທີ່ກ່າວມານັ້ນ, ມັນຈໍາ ເປັນຕ້ອງມີການທົບທວນຄືນ ແລະ ຍົກລະດັບແຜນຍຸດທະສາດຂອງລັດຖະບານ ເພື່ອໃຫ້ມີຂໍ້ແນະນໍາທີ່ຈະແຈ້ງສໍາລັບທຸກພາກສ່ວນທີ່ກ່ຽວຂ້ອງເຮັດວຽກຮ່ວມກັນ ເພື່ອກໍາຈັດການໃຊ້ຄວາມຮຸນແຮງຕໍ່ແມ່ຍິງທີ່ອີງໃສ່ບົດບາດຍິງ-ຊາຍ. ນອກຈາກນັ້ນ, ກົນໄກການປົກຄອງໃນປະຈຸບັນຄວນໄດ້ຮັບການປັບປຸງ ເພື່ອການປະສານງານຕ່າງໆກ່ຽວກັບ ບັນຫາ ແລະ ຮັບປະກັນໃຫ້ແມ່ຍິງລາວ ມີສ່ວນຮ່ວມໃນການສົນທະນາ ແລະ ຈັດຕັ້ງປະຕິບັດຂໍ້ລິເລີ່ມທີ່ກ່ຽວຂ້ອງກັບການລຶບລ້າງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ.

ສູນກາງສະຫະພັນແມ່ຍິງລາວ ໄດ້ພັດທະນາແຜນດໍາເນີນງານແຫ່ງຊາດ ກ່ຽວກັບ ການປ້ອງກັນ ແລະ ລຶບລ້າງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ເພື່ອກໍາຈັດການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ (2014-2020). ແລະ ອົງການສະຫະປະຊາຊາດ ກອງທຶນເພື່ອປະຊາກອນ ຈະໃຫ້ການສະໜັບສະໜູນ ການພັດທະນາແຜນຍຸດທະສາດ ໄລຍະ 5 ປີຕໍ່ໜ້າ ກ່ຽວກັບ ການລຶບລ້າງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ (2021-2025) ພ້ອມທັງແນວທາງໃນການຈັດຕັ້ງປະຕິບັດ ແລະ ແຜນການ ຕິດຕາມ, ກວດກາ ຂອງແຜນຍຸດທະສາດແຫ່ງຊາດ ກ່ຽວກັບ ການລຶບລ້າງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ໄລຍະ 5 ປີ (2021-2025) ໂດຍຜ່ານຂະບວນການມີສ່ວນຮ່ວມ ເພື່ອສົ່ງເສີມການມີສ່ວນຮ່ວມຂອງແມ່ຍິງ.

ທ່ານ Victor Valdivieso ຮອງຜູ້ຕາງໜ້າອົງການ ອົງການສະຫະປະຊາຊາດ ກອງທຶນເພື່ອປະຊາກອນ ກ່າວວ່າ "ອົງການສະຫະປະຊາຊາດ ກອງທຶນເພື່ອປະຊາກອນ ມີຄວາມພູມໃຈທີ່ໄດ້ຮ່ວມມືກັບ ສູນກາງສະຫະພັນແມ່ຍິງລາວ ແລະ ອົງການສະຫະປະຊາຊາດ ເພື່ອການພັດທະນາ ໃນໂຄງການຮ່ວມມືນີ້. ອົງການສະຫະປະຊາຊາດ ກອງທຶນເພື່ອປະຊາກອນ ຈະເປັນອົງການທີ່ນໍາໜ້າ ໃນການໃຫ້ການຊ່ວຍເຫຼືອທາງດ້ານເຕັກນິກໃນການສ້າງຄວາມເຂັ້ມແຂງໃຫ້ແກ່ ຂະແໜງການສັງຄົມ ແລະ ສຸຂະພາບ ສໍາລັບການປ້ອງກັນທີ່ມີປະສິດຕິຜົນ, ເປັນລະບົບ ແລະ ມີຄວາມຮັບຜິດຊອບ ຕໍ່ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ໃນ ສປປ ລາວ"

ສະນັ້ນ, ໂຄງການນີ້ຈຶ່ງໝາຍເຖິງການເຊື່ອມໂຍງທີ່ສໍາຄັນ ລະຫວ່າງ ຄວາມຈໍາເປັນໃນການລົບລ້າງຄວາມຮຸນແຮງທາງເພດ, ຜົນສໍາເລັດຂອງວາລະການພັດທະນາແຫ່ງຊາດ ແລະ ເປົ້າໝາຍການພັດທະນາແບບຍືນຍົງ. ການນໍາ ໃຊ້ບົດຮຽນທີ່ຖອດຖອນໄດ້ຈາກ ທ້ອງຖິ່ນ ແລະ ຂັ້ນສູນກາງ, ໂຄງການນີ້ມີຈຸດປະສົງສ້າງສະພາບແວດລ້ອມທີ່ບໍ່ມີ ຄວາມຮຸນແຮງ ສໍາລັບແມ່ຍິງ ແລະ ເດັກຍິງ ໂດຍການສ້າງຄວາມເຂັ້ມແຂງໃຫ້ກົນໄກການປົກຄອງໂດຍຜ່ານການມີ ສ່ວນຮ່ວມຢ່າງຕັ້ງໜ້າ ຈາກແມ່ຍິງ ແລະ ຜູ້ລອດຊີວິດຈາກຄວາມຮຸນແຮງຕໍ່ບົດບາດຍິງ-ຊາຍ ແລະ ການເຊື່ອມສານ ຄວາມຮຸນແຮງຕໍ່ບົດບາດຍິງ - ຊາຍ ເຂົ້າໃນວາລະການພັດທະນາແຫ່ງຊາດ.